**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ ເລກທີ 0594 / ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 06 ເມສາ 2026

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ປັບຂຶ້ນລາຄານ້ຳມັນເຊື້ອໄຟໃນຂອບເຂດທົ່ວປະເທດ.

- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 350/ຫສນຍ, ລົງວັນທີ 18 ມີນາ 2026;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມການຄ້າພາຍໃນ ສະບັບເລກທີ 1999/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ທິດຊີ້ນຳຂອງຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 06 ເມສາ 2026;
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟທຸກຊະນິດ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດດັ່ງນີ້:

1. ປັບຂຶ້ນລາຄານ້ຳມັນເຊື້ອໄຟ ຄື: ນ້ຳມັນແອັດຊັງ ປັບຂຶ້ນ 680 ກີບ/ລິດ ແລະ ນ້ຳມັນກາຊວນ ປັບຂຶ້ນ 1,290 ກີບ/ລິດ.

   ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງ:

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ຫຼ້າສຸດ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ນ້ຳມັນແອັດຊັງ | 41,760 | 42,440 | +680 | 1.63 | |
| 2 | ນ້ຳມັນກາຊວນ | 51,360 | 52,650 | +1,290 | 2.51 | |

(ສຳລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ແມ່ນໃຫ້ເລີ່ມປະຕິບັດວັນທີ 07 ເມສາ 2026, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການປັບລາຄານ້ຳມັນເຊື້ອໄຟ ຄັ້ງນີ້ແມ່ນ ຫຼຸດອັດຕາອາກອນຊົມໃຊ້ ນ້ຳມັນແອັດຊັງທຳມະດາ ຈາກ 25% ມາເປັນ 15 % ແລະ ນ້ຳມັນກາຊວນ 10% ມາເປັນ 0%; ນ້ຳມັນແອັດຊັງພິເສດ ນຳໃຊ້ອັດຕາ ພາສີ ຂາເຂົ້າ ແລະ

ອັດຕາພາສີຂາເຂົ້າ ແລະ ອັດຕາອາກອນຊົມໃຊ້ ສໍາລັບນໍ້າມັນແອັດຊັງພິເສດ ແລະ ພື້ນຖານຄິດໄລ່ລາຄານໍາເຂົ້າ CIF ອັນດຽວກັບ ນໍ້າມັນແອັດຊັງທໍາມະດາ ແລະ ຂາຍໃນລາຄານໍ້າມັນແອັດຊັງທໍາມະດາ. ສໍາລັບຄ່າຢອດສານມາກເກີແມ່ນໃຫ້ຢຸດເກັບຊົ່ວຄາວ.

4. ການຄິດໄລ່ພັນທະ ແລະ ຄ່າທໍານຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກໍານົດໄວ້ໃນໂຄງປະກອບລາຄານໍ້າມັນເຊື້ອໄຟ ສະບັບເລກທີ 0593/ຄພນ, ລົງວັນທີ 06 ເມສາ 2026 ຈົນກວ່າຈະມີການປ່ຽນແປງ.
5. ໃຫ້ບັນດາບໍລິສັດນໍ້າມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປໍ້າຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
6. ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນໍາຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ ລົງຕິດຕາມ, ກວດກາການຈັດຕັ້ງປະຕິບັດລາຄາໃໝ່ນີ້ ຂອງປໍ້ານໍ້າມັນເຊື້ອໄຟ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນປົກກະຕິ, ຫາກພົບເຫັນ ປໍ້າໃດບໍ່ປະຕິບັດຕາມລາຄາໃໝ່ນີ້ ໃຫ້ນໍາໃຊ້ມາດຕະການຕ່າງໆຕາມລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
7. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0565/ກຄພນ, ລົງວັນທີ 02 ເມສາ 2026.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມ

ກະຊວງອຸດສາຫະກໍາ ແລະ ການຄ້າ
ກົມການຄ້າພາຍໃນ

ສັນຕິສຸກ ພູນສະຫວັດ

<u>ບ່ອນສົ່ງ:</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຄະນະເລຂາທິການ, ສະພາແຫ່ງຊາດ (ໃຊ້ຕາງລາຍງານ).
- ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກໍາມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ (ເພື່ອຕິດຕາມ)
- ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປໍ້ານໍ້າມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 07 ເມສາ 2026, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງ | ກາຊວນ |
|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 42,440 | 52,650 |
| 2 | ແຂວງຜົ້ງສາລີ | 43,430 | 53,640 |
| 3 | ແຂວງຫຼວງນໍ້າທາ | 42,940 | 53,140 |
| 4 | ແຂວງອຸດົມໄຊ | 43,110 | 53,320 |
| 5 | ແຂວງບໍ່ແກ້ວ | 42,540 | 52,750 |
| 6 | ແຂວງຫຼວງພະບາງ | 42,950 | 53,160 |
| 7 | ແຂວງໄຊຍະບູລີ | 42,770 | 52,980 |
| 8 | ແຂວງຫົວພັນ | 42,950 | 53,160 |
| 9 | ແຂວງຊຽງຂວາງ | 42,630 | 52,840 |
| 10 | ແຂວງວຽງຈັນ | 42,440 | 52,650 |
| 11 | ແຂວງບໍລິຄໍາໄຊ | 42,490 | 52,700 |
| 12 | ແຂວງຄໍາມ່ວນ | 42,470 | 52,680 |
| 13 | ແຂວງສະຫວັນນະເຂດ | 42,470 | 52,680 |
| 14 | ແຂວງສາລະວັນ | 42,730 | 52,940 |
| 15 | ແຂວງຈໍາປາສັກ | 42,500 | 52,710 |
| 16 | ແຂວງເຊກອງ | 42,720 | 52,940 |
| 17 | ແຂວງອັດຕະປື | 42,770 | 52,980 |
| 18 | ແຂວງໄຊສົມບູນ | 42,860 | 53,080 |

ນະຄອນຫຼວງວຽງຈັນ, 6 ເມສາ 2026

ກະຊວງອຸດສາຫະກໍາ ແລະ ການຄ້າ
ກົມການຄ້າພາຍໃນ